**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 806/ຫສນຍ
ນະຄອນຫລວງວຽງຈັນ, ວັນທີ 29.7.2020

# ແຈ້ງການ

ຮຽນ : - ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາ ທ່ານ ເຈົ້າແຂວງທົ່ວປະເທດ.

ເລື່ອງ : ການສືບຕໍ່ປະຕິບັດ ບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ໃນໄລຍະແຕ່ ວັນທີ 01-31 ສິງຫາ 2020.

- ອີງຕາມຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມການລາຍງານ ການຈັດຕັ້ງປະຕິບັດ ບັນດາມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ໃນໄລຍະຜ່ານມາ;
- ອີງຕາມການປະກອບຄຳເຫັນຂອງ ບັນດາ ທ່ານ ຮອງນາຍົກລັດຖະມົນຕີ ໂດຍຜ່ານຈົດໝາຍວຽນ ແລະ ອີງຕາມການຊີ້ນຳຂອງ ທ່ານ ນາຍົກລັດຖະມົນຕີ ໃນວັນທີ 29 ກໍລະກົດ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້: ຜ່ານການຈັດຕັ້ງປະຕິບັດມາດຕະການຜ່ອນຜັນ ແລະ ມາດຕະການປ້ອງກັນ ໃນໄລຍະຜ່ານມາ, ພວກເຮົາ ສາມາດສືບຕໍ່ຄວບຄຸມການແຜ່ລະບາດໄວ້ໄດ້ ໂດຍບໍ່ພົບຜູ້ຕິດເຊື້ອໃນຊຸມຊົນ ເປັນເວລາ 03 ເດືອນກວ່າ ເຮັດໃຫ້ສັງຄົມ, ພາກທຸລະກິດ, ຜູ້ປະກອບການ, ໂຄງການ ແລະ ໂຮງງານຕ່າງໆ ໄດ້ກັບມາໃຊ້ຊີວິດ ແລະ ເຄື່ອນໄຫວທຸລະກິດ ພາຍໃຕ້ເງື່ອນໄຂໃໝ່ ເກືອບວ່າປົກກະຕິເປັນສ່ວນໃຫຍ່ມາໄລຍະໜຶ່ງ.

ເຖິງຢ່າງໃດກໍຕາມ, ພວກເຮົາ ກໍບໍ່ໄດ້ເຜີຕົວ ແລະ ປະໝາດຢ່າງເດັດຂາດ ເນື່ອງຈາກໃນຕໍ່ໜ້າ ຍັງມີຄວາມສ່ຽງ ແລະ ສິ່ງທ້າທາຍ ທີ່ຈະເກີດມີການລະບາດອີກຮອບໃໝ່ ຍ້ອນສະພາບການລະບາດຢູ່ໃນພາກພື້ນ ແລະ ໃນໂລກ ຍັງສືບຕໍ່ເພີ່ມຂຶ້ນ ແລະ ຍັງບໍ່ສາມາດຢັບຢັ້ງການລະບາດ ຂອງພະຍາດດັ່ງກ່າວໄດ້ເທື່ອ. ພ້ອມກັນນັ້ນ ຖ້າພວກເຮົາບໍ່ຄຸ້ມຄອງການເດີນທາງ ເຂົ້າ-ອອກ ປະເທດ ຢ່າງຮັດກຸມ ກໍຈະມີຄວາມສ່ຽງໃນການຕິດເຊື້ອຈາກຜູ້ທີ່ມາຈາກຕ່າງປະເທດ ຄືດັ່ງທີ່ມີກໍລະນີທີ່ໄດ້ປະກາດອອກໄປແລ້ວນັ້ນ ແລະ ສາມາດກະຈາຍອອກເປັນວົງກວ້າງໄດ້. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ສືບຕໍ່ເຂັ້ມງວດປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການລະບາດ ຂອງພະຍາດ COVID-19, ລັດຖະບານ ໄດ້ຕົກລົງ ແລະ ຊີ້ນຳ ດັ່ງນີ້:

1. ໃຫ້ສືບຕໍ່ຈັດຕັ້ງປະຕິບັດມາດຕະການຜ່ອນຜັນ ແລະ ຄວບຄຸມ ໃນໄລຍະແຕ່ວັນທີ 01 ຫາ 31 ສິງຫາ 2020 ຕາມທີ່ໄດ້ກຳນົດໃນແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 697/ສຫນຍ, ລົງວັນທີ 30 ມິຖຸນາ 2020;

2. ໃຫ້ຢຸດຊົ່ວຄາວການອະນຸຍາດໃຫ້ຍົນເຊົ່າເໝົາລຳລະຫວ່າງປະເທດ ກ່ອນ ແລະ ໃຫ້ຄະນະສະເພາະກິດສົມທົບກັບ ກົມການບິນພົນລະເຮືອນ ອອກມາດຕະການໃໝ່ ທີ່ຮັດກຸມ ສະເໜີມາຍັງລັດຖະບານ ເພື່ອຂໍອະນຸມັດກ່ອນ

ຈຶ່ງດຳເນີນການໄດ້. ໃຫ້ກິດຈະການບິນພົນລະເຮືອນ ເຈລະຈາຄືນ ກັບສາຍການບິນຕ່າງປະເທດ ທີ່ໄດ້ດຳເນີນການຜ່ານມາ ຕື່ມອີກ.

3. ສຳລັບມາດຕະການກ່ຽວກັບການຄຸ້ມຄອງຄົນເຂົ້າ-ອອກ ສປປ ລາວ ໃນໄລຍະແຕ່ວັນທີ 01-31 ສິງຫາ 2020 ມອບໃຫ້ຄະນະສະເພາະກິດ ເຮັດຄຳແນະນຳສະເພາະຕື່ມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

<u>ປ່ອນນຳສົ່ງ:</u>

- ນາຍົກ-ຮອງນາຍົກລັດຖະມົນຕີ 04 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ບັນດາສະມາຊິກລັດຖະບານ ທ່ານລະ 01 ສະບັບ
- ອົງການຈັດຕັ້ງພັກ ປ່ອນລະ 01 ສະບັບ
- ສູນກາງແນວລາວສ້າງຊາດ 01 ສະບັບ
- ອົງການຈັດຕັ້ງມະຫາຊົນ ປ່ອນລະ 01 ສະບັບ
- ສຳເນົາ 01 ສະບັບ